ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 4064 /ກງ
ນະຄອນຫຼວງວຽງຈັນ, ວັນທີ 08 ພະຈິກ 2024

# ຂໍ້ຕົກລົງ
## ວ່າດ້ວຍມາດຕະການທາງບໍລິຫານ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສໍາລັບຂະແໜງຄຸ້ມຄອງການບັນຊີ

- ອີງຕາມ ກົດໝາຍວ່າດ້ວຍ ການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;
- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ ສະບັບເລກທີ 46/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ນໍາສະເໜີ ຂອງກົມຄຸ້ມຄອງການບັນຊີ ສະບັບເລກທີ 1701 /ກຄຊ, ລົງວັນທີ 05 ພະຈິກ 2024.

## ລັດຖະມົນຕີ ກະຊວງການເງິນ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດມາດຕະການທາງບໍລິຫານ ຕໍ່ບຸກຄົນ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ເພື່ອເປັນບ່ອນອີງໃນການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ ເຮັດໃຫ້ບຸກຄົນ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຍົກສູງສະຕິ ໃນການປະຕິບັດລະບຽບ ແລະ ກົດໝາຍດັ່ງກ່າວ ຢ່າງເຂັ້ມງວດ ແລະ ເພື່ອເປັນບ່ອນອີງໃຫ້ແກ່ອົງການຄຸ້ມຄອງວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນການຈັດຕັ້ງປະຕິບັດມາດຕະການທາງບໍລິຫານຕໍ່ ບຸກຄົນ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ມີໜ້າທີ່ລາຍງານ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ມາດຕະການທາງບໍລິຫານ

ມາດຕະການທາງບໍລິຫານ ຕາມຂໍ້ຕົກລົງສະບັບນີ້ ແມ່ນການສຶກສາອົບຮົມ ບຸກຄົນ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງການລະເມີດດັ່ງກ່າວ ເປັນການລະເມີດທີ່ເບົາບາງ ແລະ ບໍ່ສ້າງຜົນເສຍຫາຍຫຼວງຫຼາຍ ເຖິງແມ່ນວ່າການລະເມີດດັ່ງກ່າວ ຈະມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນກໍ່ຕາມ.

ມາດຕະການທາງດ້ານບໍລິຫານ ປະກອບດ້ວຍ:

1. ການກ່າວເຕືອນ;
2. ການປັບໃໝ;
3. ການໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ;
4. ການຖອນໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 3 ການລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ.

ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມຂໍ້ຕົກລົງສະບັບນີ້ ປະກອບມີ:

1. ບໍ່ສ້າງລະບົບຄວບຄຸມພາຍໃນ;
2. ບໍ່ປະຕິບັດຫຼັກການ ປະເມີນ ແລະ ບໍລິຫານ ຄວາມສ່ຽງ;
3. ບໍ່ປະຕິບັດຫຼັກການຊອກຮູ້ລູກຄ້າ;
4. ບໍ່ປະຕິບັດຫຼັກການເພີ່ມທະວີການເອົາໃຈໃສ່ລູກຄ້າ;
5. ບໍ່ປະຕິບັດການເກັບກຳຂໍ້ມູນກ່ຽວກັບລູກຄ້າ;
6. ບໍ່ປະຕິບັດຫຼັກການພົວພັນກັບບຸກຄົນທີ່ມີສະຖານະພາບທາງການເມືອງ;
7. ການບໍ່ປະຕິບັດການເກັບຮັກສາຂໍ້ມູນ;
8. ບໍ່ປະຕິບັດພັນທະໃນການລາຍງານ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ;
9. ບໍ່ປະຕິບັດພັນທະໃນການລາຍງານທຸລະກຳທີ່ສົງໄສ;
10. ບໍ່ປະຕິບັດການຮັກສາຄວາມລັບຂອງການລາຍ;
11. ບໍ່ໃຫ້ການຮ່ວມມືແກ່ພະນັກງານກວດກາ ຂອງອົງການຄຸ້ມຄອງ ວຽກງານການບັນຊີ ແລະ ການກວດສອບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ;
12. ການລະເມີດແຈ້ງການ ອົງການຄຸ້ມຄອງ ວຽກງານການບັນຊີ ແລະ ການກວດສອບ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ກະຊວງການເງິນ ກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
13. ບໍລິການທາງດ້ານການບັນຊີ ແລະ ການກວດສອບ ໃຫ້ ບຸກຄົນ ແລະ ນິຕິບຸກຄົນ ທີ່ມີສະຖານະ ເປັນຜູ້ຟອກເງິນ ຫຼື ສະໜອງທຶນແກ່ຜູ່ກໍ່ການຮ້າຍ ຫຼື ຜູ້ທີ່ເປັນບັນຊີລາຍຊື່ຂ້ອນບາດ ຕາມການກຳນົດຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ຕາມກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

14. ການລະເມີດຂໍ້ຫ້າມ ທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ກົດໝາຍວ່າດ້ວຍ ການກວດສອບອິດສະລະ.

**ມາດຕາ 4 ການປະຕິບັດມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ລວມທັງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ໄດ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

**1. ການກ່າວເຕືອນ**

ກໍລະນີ ທີ່ເປັນການລະເມີດຄັ້ງທຳອິດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 1 ຫາ 14 ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນເປັນລາຍລັກອັກສອນ ເພື່ອແຈ້ງເຕືອນໃຫ້ຊາບ ແລະ ແກ້ໄຂກັບການລະເມີດຂອງຕົນ ຊຶ່ງຈະມີການກ່າວເຕືອນພຽງຄັ້ງດຽວ, ແຕ່ຫາກສືບຕໍ່ລະເມີດຈະຖືກປະຕິບັດມາດຕະການປັບໃໝ ຕາມກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**2. ການປັບໃໝ**

ບຸກຄົນ, ນິຕິບຸກຄົນ ລວມທັງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ໄດ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ພາຍຫຼັງໄດ້ມີການກ່າວເຕືອນແລ້ວ ຕ້ອງຖືກປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ກໍລະນີ ທີ່ເປັນການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 12,13 ແລະ 14 ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຫຼື ກໍລະນີ ທີ່ຖືກປະຕິບັດມາດຕະການກ່າວເຕືອນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 1 ຂອງມາດຕານີ້ແລ້ວແຕ່ຍັງສືບຕໍ່ລະເມີດ ແມ່ນຍັງຈະຖືກປັບໃໝ ຕາມທີ່ກຳນົດໄວ້ ໃນກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍວ່າດ້ວຍການກວດສອບ ແລະ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກ່ຽວກັບມາດຕະການທາງອາຍາ ຕໍ່ການຟອກເງິນ ແລະ ມາດຕະການທາງອາຍາ ຕໍ່ການສະໜອງທຶນໃຫ້ແກ່ການກໍ່ການ.

**3. ການໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ, ການຖອນໃບອະນຸຍາດດຳເນີນທຸລະກິດ**

ກໍລະນີ ທີ່ໄດ້ປະຕິບັດມາດຕະການທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 2 ຂອງມາດຕານີ້ແລ້ວ ແຕ່ຍັງສືບຕໍ່ລະເມີດ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຈະຖືກປະຕິບັດມາດຕະການ ດັ່ງນີ້:

3.1. ໂຈະ ການເຄື່ອນໄຫວທຸລະກິດ ຫຼື ປົດຕຳແໜ່ງຜູ້ບໍລິຫານ ຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍການກວດສອບອິສະລະ (ສະບັບປັບປຸງ);

3.2. ຖອນໃບອະນຸຍາດດຳເນີນທຸລະກິດ ແລະ ສົ່ງໃຫ້ອົງການທີ່ມີສິດອຳນາດ ດຳເນີນຄະດີ ຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ການກວດສອບອິດສະລະ (ສະບັບປັບປຸງ).

**ມາດຕາ 5 ຮູບການປະຕິບັດມາດຕະການ**

ການປະຕິບັດມາດຕະການທາງບໍລິຫານຕໍ່ ບຸກຄົນ, ນິຕິບຸກຄົນ ລວມທັງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ການແຈ້ງເຕືອນເປັນລາຍລັກອັກສອນ ຈະປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ບຸກຄົນ, ນິຕິບຸກຄົນ, ວິສະຫະກິດບັນຊີ ຫຼື ວິສາຫະກິດກວດສອບ;
2. ເນື້ອໃນຂອງການລະເມີດ;
3. ມາດຕະການທີ່ນຳໃຊ້;
4. ກຳນົດເວລາໃນການປັບປຸງແກ້ໄຂ;
5. ມາດຕະການໃນຕໍ່ໜ້າ ຫາກສືບຕໍ່ການລະເມີດ;
5. ມາດຕະການລະເມີດ ທີ່ເປັນກໍລະນີຮ້າຍແຮງ.

**ມາດຕາ 6 ການຮ້ອງຂໍ ( ການອຸທອນ)**

ບຸກຄົນ, ນິຕິບຸກຄົນ ລວມທັງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້ ຫາກເຫັນວ່າ ການປະຕິບັດມາດຕະການຕໍ່ຕົນບໍ່ຖືກຕ້ອງ ສາມາດຮ້ອງຂໍເປັນລາຍລັກອັກສອນ ໄປຍັງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອພິຈາລະນາ ພາຍໃນ 07 ວັນ ລັດຖະການ ນັບແຕ່ມື້ທີ່ໄດ້ຮັບຂໍ້ຕົກລົງ ວ່າດ້ວຍ ການນຳໃຊ້ມາດຕະການເປັນຕົ້ນໄປ. ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງພິຈາລະນາຄຳຮ້ອງດັ່ງກ່າວ ແລະ ແຈ້ງຕອບຜູ້ຮ້ອງຂໍ ພາຍໃນ 15 ວັນ ລັດຖະການ ນັບແຕ່ມື້ທີ່ໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງການບັນຊີ ເປັນຜູ້ຈັດຕັ້ງປະຕິບັດມາດຕະການຕ່າງໆ ຕໍ່ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ລວມທັງຜູ້ບໍລິຫານຂອງຫົວໜ່ວຍດັ່ງກ່າວ. ສຳລັບບຸກຄົນ ແລະ ນິຕິບຸກຄົນທົ່ວໄປ ແມ່ນມອບໃຫ້ເຈົ້າໜ້າທີ່ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ປະຕິບັດມາດຕະການ.

ບຸກຄົນ, ນິຕິບຸກຄົນ ລວມທັງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ສຳລັບບຸກຄົນ ທີ່ເປັນພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດ ຫາກມີການລະເມີດ ແມ່ນໃຫ້ປະຕິບັດວິໄນ ຕາມລະບຽບລັດຖະກອນ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

**ລັດຖະມົນຕີ**

ສັນຕິພາບ ພົມວິຫານ